**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 16 /ສພຂ.ຊບ
ໄຊຍະບູລີ, ວັນທີ 17 ເມສາ 2026

# ມະຕິ
## ປະຊຸມກອງສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານແຜນການເຄື່ອນໄຫວ ວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ

- ອີງຕາມ ມາດຕາ 53 ຂໍ້ 13 ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ເລກທີ 57/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ບົດລາຍງານ ຂອງອົງການໄອຍະການປະຊາຊົນແຂວງ ສະບັບເລກທີ 146/ອຍກ.ຊບ, ລົງວັນທີ 6 ເມສາ 2026.

ຜ່ານການຄົ້ນຄວ້າພິຈາລະນາ ແລະ ປະກອບຄຳເຫັນ ຂອງສະມາຊິກສະພາປະຊາຊົນແຂວງ ຢ່າງເລິກເຊິ່ງ ຕໍ່ບົດລາຍງານແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ ໃນກອງປະຊຸມຄັ້ງປະຖົມມະລືກ ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ V ຄັ້ງວັນທີ 10 ເມສາ 2026.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມ ເຫັນດີຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ ທີ່ໄດ້ກຳນົດທິດທາງລວມ, 5 ຄາດໝາຍ, 5 ແຜນງານ 19 ໂຄງການ, 45 ກິດຈະກຳ ຕາມບົດລາຍງານຂອງ ອົງການໄອຍະການປະຊາຊົນແຂວງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ຕາມສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນແຂວງ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດໄວ້ ແລະ ເຮັດໃຫ້ແຜນການດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດໃຫ້ເປັນຈິງ ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງດ້ານເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງຂອງຄະນະພັກ, ຄະນະນຳ, ສະມາຊິກພັກ ແລະ ພະນັກງານຂອງອົງການໄອຍະການປະຊາຊົນແຂວງ ແລະ ເຂດ ໃນການເຊື່ອມຊຶມ, ກຳແໜ້ນມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ, ມະຕິກົມການເມືອງສູນກາງພັກ ສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020, ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ ເຂົ້າໃນການເຄື່ອນໄຫວວຽກງານຕົວຈິງ ຂອງອົງການໄອຍະການປະຊາຊົນ ແຂວງໄຊຍະບູລີ ແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ, ປະສິດທິຜົນ.



สแกนด้วย CamScanner

2. ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຂອງອົງການໄອຍະການປະຊາຊົນແຂວງ, ອົງການໄອຍະການປະຊາຊົນເຂດ ແລະ ຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງ-ຕາແສງ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ເປັນລະບົບຄົບຊຸດ ໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງ ເພື່ອໃຫ້ພົນລະເມືອງສາມາດເຂົ້າເຖິງຂະບວນຍຸຕິທຳ ແລະ ການດຳເນີນຄະດີຂອງອົງການໄອຍະການປະຊາຊົນ ມີຄວາມສະດວກຂຶ້ນ;

3. ເອົາໃຈໃສ່ບຳລຸງສ້າງພະນັກງານອົງການໄອຍະການປະຊາຊົນແຂວງ ແລະ ເຂດ ໃຫ້ເປັນຜູ້ຊຳນານງານໃນການດຳເນີນຄະດີ, ໄປຄຽງຄູ່ກັບການບຳລຸງທາງດ້ານຄຸນທາດການເມືອງໃຫ້ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ ແລະ ເປັນມືອາຊີບ;

4. ເພີ່ມທະວີການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນ ໃນການດຳເນີນຄະດີອາຍາແຕ່ຫົວທີ ເພື່ອຮັບປະກັນໃຫ້ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ມີຄວາມຖືກຕ້ອງເຂັ້ມງວດຕາມກົດໝາຍ, ເມື່ອພົບເຫັນການ ຈັບຕົວ, ກັກຕົວ, ກັກຂັງ ຫຼື ການນຳໃຊ້ມາດຕະການສະກັດກັ້ນທີ່ເປັນການລະເມີດກົດໝາຍ, ອົງການໄອຍະການປະຊາຊົນ ຕ້ອງເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ມີມາດຕະການ, ວິທີການແກ້ໄຂໃຫ້ເດັດຂາດ ແລະ ທັນການ; ໄປພ້ອມກັນນັ້ນ ໃຫ້ເອົາໃຈໃສ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພາສີ-ອາກອນ, ປ່າໄມ້ ແລະ ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ ໃຫ້ເປັນປົກກະຕິ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ ທີ່ຈະເກີດຂຶ້ນໃຫ້ທັນເວລາ;

5. ຖືສຳຄັນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ຮັບປະກັນຫຼັກການຮອບດ້ານ, ຄົບຖ້ວນ, ພາວະວິໄສ ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ, ມີຄວາມເປັນທຳ ເພື່ອເຮັດໃຫ້ຜູ້ກະທຳຜິດຖືກລົງໂທດຕາມກົດໝາຍ ແລະ ຜູ້ບໍ່ໄດ້ກະທຳຜິດຈະບໍ່ຖືກລົງໂທດ; ການຄົ້ນຄວ້າແກ້ໄຂຄະດີ, ຄຳຮ້ອງທີ່ເຂົ້າມາອົງການໄອຍະການປະຊາຊົນ ໃຫ້ບັນລຸ 95% ຂຶ້ນໄປ ແລະ ຮັບປະກັນໃຫ້ສານຕັດສິນຄະດີ ເອົາຕາມການຖະແຫຼງຂອງອົງການໄອຍະການ;

6. ເອົາໃຈໃສ່ປັບປຸງກົນໄກການປະສານງານ ໃນການດຳເນີນຄະດີຕາມຂະບວນຍຸຕິທຳໃຫ້ມີຄຸນນະພາບ, ເພີ່ມທະວີຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ມີຄວາມເຂັ້ມງວດ ເພື່ອເຮັດໃຫ້ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ຕາມກົດໝາຍເທື່ອລະກ້າວ.

**ມາດຕາ 2 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງອົງການໄອຍະການປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ການກຳນົດ 5 ມາດຕະການ ໃນການຈັດຕັ້ງປະຕິບັດ ທີ່ອົງການໄອຍະການປະຊາຊົນແຂວງ ກຳນົດໄວ້ໃນບົດລາຍງານ, ເພື່ອເຮັດໃຫ້ແຜນການເຄື່ອນໄຫວວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມດັ່ງນີ້:

1. ສືບຕໍ່ປັບປຸງແຜນການເຄື່ອນໄຫວວຽກງານ 5 ປີ ໃຫ້ມີຄວາມສອດຄ່ອງ ລະຫວ່າງ ແຜນວຽກ, ແຜນຄົນ ແລະ ແຜນເງິນ. ນຳພາ-ຊີ້ນຳອົງການໄອຍະການປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນເຂດ ໃນການຈັດຕັ້ງຜັນຂະຫຍາຍແຜນງານ, ໂຄງການ ແລະ ກິດຈະກຳ 5 ປີ (2026-2030) ໃຫ້ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນແຂວງ-ເຂດ ພ້ອມທັງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ເປັນຈິງ;



สแกนด้วย CamScanner

2. ເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະພັກ-ຄະນະນຳອົງການໄອຍະການປະຊາຊົນແຕ່ລະຂັ້ນ ໃນການບຳລຸງສ້າງ, ກໍ່ສ້າງຖັນແຖວພະນັກງານໄອຍະການທາງດ້ານຈຳນວນ ແລະ ຄຸນນະພາບ ໂດຍຖືສຳຄັນຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ-ຈັນຍາທຳ, ມີນ້ຳໃຈຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດຜຸດຜ່ອງ, ມີຄວາມຮູ້ຄວາມສາ ມາດທາງດ້ານວິຊາການ ຢ່າງເປັນມືອາຊີບ ແລະ ມີຄວາມຮັບຜິດຊອບສູງ ຕໍ່ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບການຮັບມອບໝາຍ;

3. ເພີ່ມທະວີການຕິດຕາມກວດກາ ການປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນແຂວງ ແລະ ເຂດ, ພະນັກງານໄອຍະການປະຊາຊົນແຕ່ລະຂັ້ນ ໃນການປະຕິບັດພາລະບົດບາດສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການດຳເນີນຄະດີ ຕາມຂະບວນຍຸຕິທຳໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ກວດສອບໄດ້;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປັບປຸງກົນໄກການດຳເນີນຄະດີ ຕາມຂະບວນຍຸຕິທຳ ໃຫ້ມີຄວາມກົມກຽວ, ໄລ່ງລ່ຽນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດກົດໝາຍ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງຂະບວນຍຸຕິທຳໄດ້ສະດວກ ແລະ ວ່ອງໄວ;

5. ໃຫ້ຄະນະກຳມະການປົກຄອງແຂວງອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການໄອຍະການປະຊາຊົນແຂວງ ໃຫ້ມີຜົນສຳເລັດສູງຕາມລະດັບຄາດໝາຍ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການໄອຍະການປະຊາຊົນແຂວງ ແລະ ເຂດ ປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ຄະນະກຳມະການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການທີ່ກ່ຽວຂ້ອງ ປະຕິບັດມະຕິນີ້ ຢ່າງເຂັ້ມງວດ;

3. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງບິລັນ ຄຳພັນເພັງ



สแกนด้วย CamScanner